# ບົດອອກຂ່າວ

## ກອງປະຊຸມຖະແຫຼງຂ່າວກ່ຽວກັບ ກອງປະຊຸມໂຕະມົນປະຈຳປີ 2017 ເລັ່ງໃສ່ການພັດທະນາຂອງ ສປປ ລາວ

ກອງປະຊຸມຈະໄດ້ຈັດຂຶ້ນໃນວັນທີ 22-23 ພະຈິກ 2017 ທີ່ແຂວງ ຈຳປາສັກ

**ນະຄອນຫລວງວຽງຈັນ, ວັນທີ 13 ພະຈິກ 2017** - ກະຊວງແຜນການ ແລະ ການລົງທຶນ ຮ່ວມກັບ ອົງການສະຫະປະຊາຊາດເພື່ອການພັດທະນາປະຈຳ ສປປ ລາວ ໄດ້ຈັດພິທີຖະແຫລງຂ່າວຂຶ້ນທີ່ ສະມາຄົມນັກຂ່າວແຫ່ງ ສປປ ລາວ ກ່ຽວກັບກອງປະຊຸມໂຕະມົນປະຈຳປີ 2017 ເຊິ່ງຈະໄດ້ຈັດຂຶ້ນໃນວັນທີ 22-23 ພະຈິກ ທີ່ ເມືອງປາກເຊ, ແຂວງຈຳປາສັກ.

ຈຸດປະສົງຂອງກອງປະຊຸມໂຕະມົນປະຈຳປີຄັ້ງນີ້ ແມ່ນເພື່ອປຶກສາຫາລືກ່ຽວກັບເປົ້າໝາຍສຳລັບການພັດທະນາປະຈຳປີ ແລະ ກຳນົດນະໂຍບາຍສະໜັບສະໜູນສຳລັບຂະແໜງການໂດຍໄດ້ເນັ້ນໜັກ 4 ຫົວຂໍ້ທີ່ຕິດພັນກັບການບັນລຸແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ຄື: 1. ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ; 2. ການລົງທຶນທີ່ມີຄຸນນະພາບຂອງເອກະຊົນ ສຳລັບການພັດທະນາ; 3. ການລົງທຶນໃສ່ ການພັດທະນາສີມືແຮງງານ ເຊິ່ງເປັນປັດໃຈສຳຄັນ ໃນການພັດທະນາມະນຸດ; 4. ການເພີ່ມທະວີການຮ່ວມມືແບບໃຕ້-ໃຕ້ ແລະການຮ່ວມມືແບບສາມຫຼ່ຽມ.

ກອງປະຊຸມໄດ້ເຊື້ອເຊີນຜູ້ເຂົ້າຮ່ວມຈຳນວນຫຼວງຫຼາຍຈາກ ຄູ່ຮ່ວມພັດທະນາ ຂອງລັດຖະບານ ເພື່ອປຶກສາຫາລືກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານໃນ 2017 ພ້ອມທັງຖອດຖອນບົດຮຽນ ແລະ ພ້ອມກັນຄົ້ນຄວ້າກຳນົດບູລິມະສິດສຳລັບປີ 2018. ໃນປີໜ້າ, ຈະໄດ້ມີການປະເມີນກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ໄລຍະ 2016-2020 ແລະ ກໍ່ເປັນປີທຳອິດຂອງ ສປປ ລາວ ໃນການກະກຽມບົດລາຍງານແບບສະໝັກໃຈກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ ເພື່ອລາຍງານທີ່ກອງປະຊຸມລະດັບສູງຂອງອົງການສະຫະປະຊາຊາດ. ພ້ອມນັ້ນ, ກໍ່ຍັງຈະໄດ້ມີການປະເມີນສະຖານະພາບໃນການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ເຊິ່ງ ສປປ ລາວ ໄດ້ວາງເປົ້າໝາຍການຫຼຸດພົ້ນໃຫ້ໄດ້ພາຍໃນປີ 2020.

ກອງປະຊຸມໂຕະມົນປະຈຳປີ ເປັນສ່ວນໜຶ່ງໃນກົນໄກຂອງຂະບວນການໂຕະມົນ ເພື່ອຮັບປະກັນຄວາມສຳເລັດສູງສຸດຂອງການພັດທະນາ. ກອງປະຊຸມໂຕະມົນປະຈຳປີ ຍັງເປັນເວທີປຶກສາຫາລື ແລະຕົກລົງເຫັນດີຮ່ວມກັນເພື່ອຈັດຕັ້ງປະຕິບັດບັນດາບູລິມະສິດເພື່ອການພັດທະນາໃຫ້ສຳເລັດຜົນຢ່າງເປັນຮູບປະທຳ. ຂະບວນການໂຕະມົນ ໂດຍມີລັດຖະບານເປັນປະທານ ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ ກໍ່ຄື ອົງການສະຫະປະຊາດ ເປັນປະທານຮ່ວມ ມີ 10 ຫນ່ວຍງານຂະແຫນງການ (SWGs) ເປັນອົງປະກອບເພື່ອປະສານງານໃນການຈັດຕັ້ງປະຕິບັດແຜນດຳເນີນງານຂອງການພັດທະນາ.

ສ່ວນກອງປະຊຸມປະຈຳປີຄັ້ງນີ້ ແມ່ນກຳລັງຢູ່ໃນຂັ້ນຕອນການກະກຽມເພື່ອຈະໄດ້ຈັດຂຶ້ນທີ່ປາກເຊ, ແຂວງ ຈຳປາສັກ ໃນວັນທີ 22-23 ພະຈິກ 2017.

ທ່ານ ປອ ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ໄດ້ເຫນັ້ນວ່າ: "ຂະບວນການໂຕະມົນ ແມ່ນເວທີທີ່ສຳຄັນຢ່າງຍິ່ງ ເຊິ່ງສ້າງໂອກາດໃຫ້ແກ່ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ແລະ ພາກສ່ວນກ່ຽວຂ້ອງ ໃນລະດັບສູນກາງ ແລະ ທ້ອງຖິ່ນ ໄດ້ມີການທົບທວນ, ປຶກສາຫາລືປະເດັນຕ່າງໆ, ສ້າງຄວາມເຂົ້າໃຈ ແລະ ໄດ້ໃຫ້ຄຳໝັ້ນສັນຍານຳກັນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ພາຍໃຕ້ຄວາມເປັນເຈົ້າການຂອງລັດຖະບານ".

ພ້ອມນັ້ນ, ທ່ານ ນາງ ຄາລີນາ ອິມໂມເນັນ, ຜູ້ປະສານງານ ຂອງ ອົງການສະຫະປະຊາຊາດ, ຜູ້ຕ່າງຫນ້າ ອົງການ ສະຫະປະຊາຊາດເພື່ອການພັດທະນາປະຈຳ ສປປ ລາວ ໄດ້ໃຫ້ຄຳເຫັນວ່າ: "ຂ້າພະເຈົ້າຂໍຊົມເຊີຍຄວາມເປັນເຈົ້າການຂອງລັດຖະບານໃນການກະກຽມຈັດກອງປະຊຸມປະຈຳປີຄັ້ງນີ້ ເຊິ່ງກໍ່ເປັນອີກຄັ້ງທີ່ຈະໄດ້ຈັດຂຶ້ນຢູ່ນອກນະຄອນຫຼວງ ເພື່ອສະແດງໃຫ້ເຫັນຢ່າງຈະແຈ້ງເຖິງຄວາມພະຍາຍາມຮ່ວມກັນໃນພັດທະນາທີ່ຄຳນຶງເຖິງທ້ອງຖິ່ນ. ກອງປະຊຸມປີນີ້ ກໍ່ເປັນອີກຄັ້ງໜຶ່ງທີ່ຈະໄດ້ມີຜູ້ເຂົ້າຮ່ວມຈາກຫຼາຍພາກສ່ວນ ເພື່ອມາເປັນຄະນະສົນທະນາ ໃນການແລກປ່ຽນປະສົບການ ແລະ ທິດທາງທີ່ຕິດພັນກັບ 4 ຫົວຂໍ້ທີ່ຖືກຄັດເລືອກ ເລັ່ງໃສ່ຮັບປະກັນຜົນປະໂຫຍດໃຫ້ແກ່ປະຊາຊົນ ໂດຍອີງໃສ່ຄຳຂວັນ ບໍ່ປະຖິ້ມໃຜໄວ້ຂ້າງຫຼັງ".

ເບິ່ງຂໍ້ມູນເພີ້ມເຕີມໄດ້ທີ່ເວັບໄຊທ໌ຂອງໂຕະມົນ: http://rtm.org.la/

**ພົວພັນຂໍ້ມູນໄດ້ທີ່:**


- **ທ່ານ ມໍລະກົດ ວົງໄຊ, ຫົວຫນ້າພະແນກ ສປຊ, ກົມຮ່ວມມືສາກົນ, ກ/ຊ ແຜນການແລະການລົງທຶນ ໂທ**: 021-222214, Email: k_vongxay@hotmail.com
- **ນາງ** Ildiko Hamos-Sohlo, **ຊ່ຽວສານ ການດ້ານການສື່ສານ, ຫົວຫນ້າຫນ່ວຍງານ ຂໍ້ມູນຂ່າວສານ ຂອງ ອົງການ ສປຊ ເພື່ອການພັດທະນາ ໂທ**: 021 267 778, Email: ildiko.hamos@undp.org